ກະຊວງການຕ່າງປະເທດ

ເອກະສານມາເຖິງ

ເລກທີ 8198

ລົງວັນທີ 30/08/18

ລົງຜ່ານໂທລະສານ-ແຟັກ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ສະຖານເອກອັກຄະລັດຖະທູດ

ສປປ ລາວ-ວໍຊິຕັນ, ດີຊີ

<u>ໂທລະສານທາງລັດຖະການ</u>

ເຖິງ: ກະຊວງການຕ່າງປະເທດ (ກົມ ອອ, ສກ) ທີ່ <u>ນະຄອນຫຼວງວຽງຈັນ.</u>

ຈາກ: ສະຖານເອກອັກຄະລັດຖະທູດ ສປປ ລາວ-ວໍຊິງຕັນ, ດີຊີ

ເລກທີ: 1126 /ສລວ.ສກ/18, ວັນທີ 29 ສິງຫາ 2018

ຂໍຖືເປັນກຽດລາຍງານມາຍັງກະຊວງຊາບວ່າ: ສະຖານທູດໄດ້ຮັບຈົດໝາຍຈາກ ຫ້ອງການ Registrar Corp (ຈົດໝາຍຄັດຕິດມາພ້ອມນີ້) ໄດ້ແຈ້ງໃຫ້ຊາບວ່າກຸ່ມທຸລະກິດທີ່ເຮັດກິດຈະການປະເພດອາຫານທີ່ນຳເຂົ້າມາອາເມຣິກາ ຈາກປະເທດຕ່າງໆ ລວມທັງ ສປປ ລາວ ຕ້ອງໄດ້ລົງທະບຽນຄືນໃໝ່ກັບ ຫ້ອງການຄຸ້ມຄອງອາຫານ ແລະຢາ ສ.ອາເມຣິກາ (U.S. Food and Drug Administration) ກ່ອນວັນທີ 1 ຕຸລາ 2018 ແລະ ກ່ອນວັນທີ 1 ມັງກອນ 2020 ສິນຄ້າ (ປະເທດອາຫານເຄື່ອງດື່ມ) ຈາກ ສປປ ລາວຕ້ອງໄດ້ກວດກາເບິ່ງສະຫຼາກກ່ຽວກັບລາຍລະອຽດຄຸນຄ່າຂອງອາຫານ (Nutrition Facts) ຄືນໃໝ່ເພື່ອໃຫ້ແທດເໝາະກັບກົດໝາຍສະບັບໃໝ່ (New Labelling Requirements).

ສຳລັບລາຍລະອຽດກະລຸນາຕິດຕໍ່: ໂທ: +1 (757) 224-0177 ແລະ <u>www.registrarcorp.com/livehelp</u>

<u>ດັ່ງນັ້ນ, ຈຶ່ງລາຍງານມາຍັງກະຊວງເພື່ອຊາບແລະ ພິຈາລະນາປະສານງານກັບພາກສ່ວນກ່ຽວຂ້ອງຕາມທາງຄວນດ້ວຍ.(ຈົບ) ເອກອັກຄະລັດຖະທູດ.</u>

<u>ຈັດສົ່ງຖືກຕ້ອງ</u>

ຫົວໜ້າຫ້ອງການ

ທ່ານ ແພງ ດວງທອງລາ

ອັກຄະລັດຖະທູດທີ່ປຶກສາ